ຂໍ້ມູນຕິດຕໍ່:
Email: syvongsak123@gmail.com ໂທ: +85620 98003648

# Lan Xang Literature

## Lecture 4:
## Thinking Concept of Lao Feudal System (Con.)

ຂໍ້ມູນຕິດຕໍ່:

Email: syvongsak123@gmail.com ໂທ: +85620 98003648

# ບົດສອນ

**ວິຊາ:** ວັນນະຄະດີລ້ານຊ້າງ

**ລະຫັດ:** 0907409

**ບົດທີ 4:** ລະບົບແນວຄິດຂອງລະບອບສັກດີນາລາວ (ຕໍ່)

ເວລາ: 90 ນາທີ

**ຜູ້ບັນຍາຍ:** ປທ. ສົມທະເພີຍ ສີວົງສັກ

**ປີ:** 3

**ພາກຮຽນ:** 2

**ສົກຮຽນ:** 2022-2023

| **ຂັ້ນຕອນ 1 - ຜົນຮັບທີ່ຕ້ອງການ (Desired Results)** | |
|---|---|
| **ສ້າງເປົ້າໝາຍ (Goals):**<br>ນັກຮຽນຈະຮູ້:<br>- ເນື້ອໃນວັນນະຄະດີ<br>- ສິລະປະການປະດິດແຕ່ງ | |
| **ຄວາມເຂົ້າໃຈ (Understand):**<br>ນັກຮຽນຈະເຂົ້າໃຈ:<br>- ເນື້ອໃນວັນນະຄະດີ<br>- ສິລະປະການປະດິດແຕ່ງ | **ຄໍາຖາມຫຼັກ (Questions):**<br>1) ວັນນະຄະດີສະໄໝອານາຈັກລາວລ້ານຊ້າງມີເນື້ອໃນເວົ້າເຖິງຫຍັງແດ່?<br>2) ເປັນຫຍັງເພດຍິງຈຶ່ງເປັນຮູບພາບໃຈກາງຂອງວັນນະກໍາໄລຍະນັ້ນໄດ້?<br>3) ສິລະປະການປະດິດແຕ່ງວັນນະຄະດີຂຽນສະໄໝອານາຈັກລາວລ້ານຊ້າງເປັນແນວໃດ? |
| **ຄວາມຮູ້ (Knowledge):**<br>- ໃຫ້ນັກຮຽນຮູ້ໄດ້ເຖິງເນື້ອ ແລະ ສິລະປະການປະດິດແຕ່ງໃນບົດວັນນະຄະດີສະໄໝອານາຈັກລາວລ້ານຊ້າງ. | **ທັກສະ (Skills):**<br>- ອະທິບາຍໄດ້ເຖິງເນື້ອໃນ ແລະ ສິລະປະການປະດິດແຕ່ງບົດວັນນະຄະດີໃນສະໄໝອານາຈັກລາວລ້ານຊ້າງ. |
| **ຂັ້ນຕອນ 2 - ຫຼັກຖານປະເມີນ (Evidence)** | |
| **ໜ້າວຽກສິດສອນ (Tasks):**<br>- ສັງເກດການຄົ້ນຄວ້າຂອງນັກສຶກສາ<br>- ສົນທະນາຖາມ-ຕອບ<br>- ແນະນໍາການຄົ້ນຄວ້າ.<br>- ໃບວຽກບ້ານ | **ຫຼັກຖານອື່ນໆ (Other Evidence):**<br>- ລາຍງານຜົນການຄົ້ນຄວ້າ<br>- ເນື້ອໃນຄໍາຕອບກິດຈະກໍາຂອງນັກສຶກສາ<br>- ການສັງຮວມກິດຈະກໍາ<br>- ຜົນການກວດວຽກບ້ານ |

ຂໍ້ມູນຕິດຕໍ່:

Email: syvongsak123@gmail.com ໂທ: +85620 98003648

**ຂັ້ນຕອນ 3 ແຜນການຮຽນ-ການສອນ (Teaching and Learning Plan)**

- **ສື່ການສອນມີ:**

ປຶ້ມຕໍາລາວິຊາວັນນະຄະດີລ້ານຊ້າງ, ວັນນະຄະດີລາວ 630LI222, ເວັບໄຊ້ຂໍ້ມູນ, ຄອມພິວເຕີ, ເຄື່ອງສາຍ LCD.

- **ກິດຈະກໍາການຮຽນ**

**ທວນຄືນ ແລະ ລ້ຽວເຂົ້າສູ່ບົດຮຽນ:**

**I. ທວນຄືນບົດຮຽນເກົ່າ**

- ຄູນໍາພານັກຮຽນທວນຄືນບົດຮຽນ ໂດຍໃຫ້ນັກຮຽນເວົ້າເຖິງສາສະໜາພຸດ ແລະ ວັດທະນະທໍາໂດຍຫຍໍ້.

**II. ຂັ້ນລ້ຽວເຂົ້າສູ່ບົດສອນ:**

**ບົດທີ 2**

**ລະບົບແນວຄິດຂອງລະບອບສັກດີນາລາວ (ຕໍ່)**

**2.5 ເນື້ອໃນວັນນະຄະດີ** (40 ນາທີ)

<u>ກິດຈະກໍາ 1:</u>

- ຄູຕັ້ງຄໍາຖາມໃຫ້ນັກສຶກສາຄົ້ນຄວ້າ, ສະເໜີນັກສຶກສາອ່ານປຶ້ມຕໍາລາ
  1) ວັນນະຄະດີສະໄໝອານາຈັກລາວລ້ານຊ້າງມີເນື້ອໃນເວົ້າເຖິງຫຍັງແດ່?
  2) ເປັນຫຍັງເພດຍິງຈຶ່ງເປັນຮູບພາບໃຈກາງຂອງວັນນະກໍາໄລຍະນັ້ນໄດ້?
- ຄູໃຫ້ນັກສຶກສາຕອບ 1-2 ຄົນ (10 ນາທີ)
- ຄູສະຫຼຸບບົດຮຽນກິດຈະກໍາ: (30 ນາທີ)

ກ່ອນຈະເຂົ້າເລິກຊອກຮູ້ເຖິງເນື້ອໃນ ແລະ ສິລະປະຂອງໜັງສືເລື່ອງວັນນະຄະດີລາວລ້ານຊ້າງກ່ອນອື່ນໝົດພວກເຮົາຄວນຮູ້ເຖິງຈຸດສະພາບລວມຂອງວັນນະຄະດີສະໄໝນີ້ສາກ່ອນ. ໜັງສືເລື່ອງຂອງວັນນະຄະດີສະໄໝນີ້ມີລັກສະນະໜຶ່ງທີ່ນໍາພາໃຫ້ມີຄວາມຫຍຸ້ງຍາກໃນການຄົ້ນຄວ້ານັ້ນແມ່ນບັນດາໜັງສືເລື່ອງຕ່າງໆບໍ່ມີນາມຂອງຜູ້ແຕ່ງຖ້າບົດໜັງສືເລື່ອງມີນາມຂອງຜູ້ແຕ່ງພັດບໍ່ມີ ວັນ, ເດືອນ, ປີຂອງການແຕ່ງ. ບັນຫານີ້ແມ່ນເຮັດໃຫ້ການຄົ້ນຄວ້າພົບຄວາມຫຍຸ້ງຍາກຫຼາຍປະການ, ອີກບັນຫາໜຶ່ງບັນດາໜັງສືເລື່ອງເຫຼົ່ານີ້ພັດກາຍເປັນເລື່ອງພື້ນເມືອງ, ມີລັກສະນະເລົ່າປາກຕໍ່ປາກອີກ. ສິ່ງດັ່ງກ່າວກໍພາໃຫ້ພົບຄວາມຫຍຸ້ງຍາກເຊັ່ນກັນ. ແຕ່ວັນນະຄະດີນີ້ກໍມີຄວາມສະດວກໃນການຄົ້ນຄວ້າເໝືອນກັນ ເພາະເນື້ອໃນບັນດາໜັງສືເລື່ອງໄດ້ສ່ອງແສງເຖິງບັນຫາຂອບເຂດສັງຄົມໜ້ອຍບັນຫາ, ເນື້ອໃນຂອງບັນດາໜັງສືເລື່ອງດັ່ງກ່າວເກືອບວ່າຄ້າຍຄືກັນຕ່າງແຕ່ຕົວລະຄອນເທົ່ານັ້ນ.

ປະການໜຶ່ງອີກ ເມື່ອສາສະໜາພຸດໄດ້ແຜ່ຂະຫຍາຍເຂົ້າສູ່ສູວັນນະພູມລາວແລ້ວ, ທິດສະດີຂອງສາສະໜາໄດ້ແຊກຊຶມແນວຄິດຂອງປວງຊົນລາວທັງຊາດໄດ້ຢ່າງເລິກເຊິ່ງຈຸດໜັກແມ່ນ ທິດສະດີ ໃຊ້ຊາດ ແລະ ການເຊື່ອຖືພະອິນພະພົມຂອງສາສະໜາພາມ. ສອງທິດສະດີນີ້ໄດ້ສິ່ງຜົນສະທ້ອນຢ່າງຫຼວງຫຼາຍຕໍ່ກັບຊີວິດການເປັນຢູ່ຂອງປະຊາຊົນ ແລະ ກໍ

ສິ່ງຜົນສະທ້ອນໃຫ້ແກ່ການປະດິດແຕ່ງໜັງສືເລື່ອງໃນສະໄໝນີ້ຢ່າງຈະແຈ້ງ. ຈຸດໜັກແມ່ນການສ້າງຕົວລະຄອນໃນໜັງສືເລື່ອງຜ່ານຊີວິດຂອງນັກແຕ່ງ ແລະ ການເຄື່ອນໄຫວຂອງຕົວລະຄອນລ້ວນແຕ່ສະແດງອອກໃນການແກ້ໄຂບັນຫາຂອງບົດເລື່ອງ. ພວກເຮົາຕ້ອງເຂົ້າໃຈຈະແຈ້ງຕື່ມວ່າບໍ່ແມ່ນນັກແຕ່ງ ຫຼື ນັກຂຽນບັນ ທຶກລ້ອນຈ້ອນເອົາທຸກສິ່ງທຸກຢ່າງປາກົດການຊີວິດເຂົ້າໃນບົດນິພົນຂອງຕົນ, ເຂົາເຈົ້າຄັດເລືອກເອົາແຕ່ປາກົດການທີ່ເດັ່ນ ຫຼື ບັນຫາທີ່ເດັ່ນໃນຊີວິດທີ່ມີການພົວພັນໃນສັງຄົມເຂົ້າໃນບົດຂອງຕົນ, ເພື່ອເຮັດໃຫ້ບົດມີເນື້ອໃນຈະແຈ້ງ ແລະ ສ່ອງແສງເຖິງສະພາບຕົວຈິງຂອງສັງຄົມຢ່າງຄົບຖ້ວນກວ່າເກົ່າ.

ເມື່ອເວົ້າເຖິງບົດປະພັນວັນນະຄະດີສະໄໝໜຶ່ງ ອາດຈະມີຫຼາຍບັນຫາທີ່ຕ້ອງຖືກຖຽງກັນ ແລະ ສົນທະນາກັນຢ່າງລະອຽດ ເພາະວ່າ ວັນນະຄະດີສະໄໝນີ້ມີຫຼາຍບັນຫາທີ່ນັກແຕ່ງໄດ້ສ່ອງແສງໃຫ້ຜູ້ອ່ານເຫັນສະພາບຕົວຈິງຂອງສັງຄົມລາວ. ແຕ່ເປັນໜ້າເສຍດາຍທີ່ບັນດາໜັງສືເລື່ອງດັ່ງກ່າວຂາດນາມຜູ້ແຕ່ງຈຶ່ງເຮັດໃຫ້ການຕີລາຄາຕໍ່ໜັງສືດັ່ງກ່າວມານັ້ນຂາດຄວາມຊັດເຈນ ແລະ ມີບາງເທື່ອກໍບໍ່ຖືກຕາມເປົ້າໝາຍທີ່ໜັງສືເລື່ອງຢາກເວົ້າເຖິງ. (ກຽງແກ້ວ ນອນນະວົງ ພ້ອມຄະນະ, 2002).

**2.5.1 ເນື້ອໃນທີ່ເວົ້າເຖິງບຸກຄົນອຸດົມຄະຕິ ຫຼື ຮູບແບບຄົນຂອງຊົນຊັ້ນສັກດີນາ**

ອາດເວົ້າໄດ້ວ່າແຕ່ລະຊັ້ນຄົນທີ່ດຳລົງຊີວິດຢູ່ໃນສັງຄົມໜຶ່ງລ້ວນແຕ່ມີແບບຄົນຂອງໃຜລາວ ແລະມີເງື່ອນໄຂກໍ່ສ້າງຄົນຂອງແຕ່ລະຊັ້ນຄົນກໍແຕກຕ່າງກັນ. ແຕ່ຮູບແບບຄົນຂອງຊົນຊັ້ນສັກດີນາລາວທີ່ຈະນຳສະ ເໜີຢູ່ນີ້ລ້ວນແຕ່ມີເງື່ອນໄຂປະກອບສ້າງຢ່າງຄັກແນ່. ຕາມລາຍລະອຽດດັ່ງຕໍ່ໄປນີ້:

1) ບຸກຄົນອຸດົມຄະຕິຂອງຊົນຊັ້ນສັກດີນາລາວລວມມີ 4 ເງື່ອນໄຂຄື: ເປັນຜູ້ເກັ່ງກ້າສາມາດທາງດ້ານສາດ ຕະສິນ, ເປັນຜູ້ຈົ່ງຮັກພັກດີຕໍ່ເຊື້ອຊາດຕະກຸນ, ເປັນຜູ້ທີ່ຜ່ານຜ່າອຸປະສັກຄວາມຫຍຸ້ງຍາກເພື່ອສຳເລັດໜ້າທີ່ ແລະເຮັດວຽກບໍ່ຮຽກຮ້ອງຄຸນຄ່າຕອບແທນ.

❖ **ມີຄວາມເກັ່ງກ້າສາມາດ**

ມີຄວາມເກັ່ງກ້າສາມາດທາງດ້ານສາດຕະສິນອາຄົມຂອງບັນດາທ້າວນາງທີ່ສ່ອງແສງອອກໃນບົດວັນນະກຳຕ່າງໆນັ້ນມີ 2 ຮູບການຄື:

**ຮູບການທີ 1 :** ຄວາມເກັ່ງກ້າສາມາດທາງດ້ານສາດຕະສິນອາຄົມທີ່ມີມາແຕ່ທ້ອງແມ່.

ຕົວຢ່າງ:

- ຢູ່ໃນເລື່ອງ "ສັງສິນໄຊ" ໄດ້ຂຽນໄວ້ວ່າ:

... ຕົນປະເສີດເຈົ້າ ເຈຍລະຈາກສະເດັດຕາມ
ທັງສິດສອນ ດາບເລີຍລົງມື້ມ

- ຢູ່ໃນເລື່ອງ "ທ້າວສີທົນ" ໄດ້ຂຽນໄວ້ວ່າ:

ເມື່ອນັ້ນ ບາສີນ້ອຍ ຖວາຍທອດຄີງຫງາຍ

ດູດັ່ງຄໍາຊາວຫຼອມ ຫູ່ລ້ຽງໃນເບົ້າ

ມີທັງຂອງແພງເຈົ້າ ທະນູສິນກັບດາບ

ຄຽດຄາດເນື້ອ ນໍາໝັ້ນບໍ່ວາງ

**ໝາຍຄວາມວ່າ**: ຄວາມເກັ່ງກ້າສາມາດຈະມີມາແຕ່ກໍາເນີດ (ເກີດມາຈະມີອາວຸດມາພ້ອມ).

**ຮູບການທີ 2**: ຄວາມເກັ່ງກ້າສາມາດທາງດ້ານສາດຕະສິນອາຄົມຂອງທ້າວນາງມີມາໄດ້ຍ້ອນການຮໍ່າຮຽນນໍາພໍ່ກໍານໍາຄູຈຸດໜັກແມ່ນຮຽນນໍາພະລືສີຄື: ຕົວລະຄອນທ້າວໂສວັດໃນເລື່ອງ: "ທ້າວໂສວັດ" ທ້າວລິນທອງໃນເລື່ອງ: "ທ້າວລິນທອງ" ແລະ ອື່ນໆ ຄວາມສາມາດດັ່ງກ່າວຂອງທ້າວນາງທີ່ສ່ອງແສງອອກໃນບັນດາບົດເລື່ອງນັ້ນ ແມ່ນເພື່ອສ້າງຄວາມເຊື່ອໝັ້ນໃຫ້ແກ່ປະຊາລາຊະດອນກໍຄືເຊື້ອຕະກຸນຂອງເຂົາເຈົ້າ.

- **ບຸກຄົນຊື່ສັດສຸດຈະລິດຕໍ່ເຊື້ອຕະກຸນ**

ບັນດາທ້າວ-ນາງທີ່ຈະລົງມາເກີດນັ້ນບໍ່ແມ່ນຄົນທໍາມະດາແມ່ນພະຍາອິນ, ພະຍາພົມລົງມາໃຊ້ຊາດສະແດງອອກຄື: ກ່ອນຈະລົງມາສູ່ທ້ອງຄົນຜູ້ເປັນພໍ່ແມ່ ແມ່ນໄດ້ຝັນເຫັນສິ່ງແປກປະຫຼາດຕ່າງໆເຊັ່ນ: ໃນເລື່ອງ ສິນໄຊ ກ່ອນສິນໄຊຈະລົງມາເກີດພໍ່ແມ່ກໍໄດ້ຝັນວ່າ:

ອັນໜຶ່ງ ຝັນວ່າໄດ້ແບກດາບ ດວງປະເສີດແສນໄສ

ທັງແດນໂດຍ ກ່າວກົວທັງຄ້າຍ...

ນັ້ນແມ່ນໄດ້ສ້າງຄວາມເຊື່ອຖືໃຫ້ແກ່ປະຊາຊົນ ແລະ ເວລາເກີດມາກໍແປກປະຫຼາດແທ້ມີດາບ, ມີທະນູສິນ, ມີຄວາມເກັ່ງກ້າສາມາດ, ມີລິດເດດມາພ້ອມແຕ່ວ່າ ເມື່ອເຂົາເຈົ້າເກີດມາແບບນັ້ນເຂົາຈໍາເປັນຕ້ອງເຮັດວຽກດ້ວຍຄວາມສະໝັກໃຈ, ມີຄວາມຊື່ສັດບໍລິສຸດເພື່ອຕອງສະໜອງກັບເຊື້ອຕະກຸນ (ເວົ້າລວມແລ້ວ ແມ່ນເປັນຜູ້ສືບຕະກຸນ) ແທນເຈົ້າຊີວິດ.

- **ຜ່ານຜ່າຄວາມຫຍຸ້ງຍາກມີຄວາມອົດທົນຜ່ານຜ່າອຸປະສັກເພື່ອສ້າງຜົນງານ**

ບັນດາທ້າວ-ນາງຕ່າງໆທີ່ເປັນຕົວລະຄອນເອກໃນບົດເລື່ອງຕ່າງໆ ເມື່ອກໍາເນີດເກີດມາແລ້ວຕ້ອງໄດ້ພົບກັບອຸປະສັກຕ່າງໆໃນຊີວິດ, ຜ່ານຜ່າຄວາມຫຍຸ້ງຍາກຈຶ່ງໄປເຖິງເປົ້າໝາຍເຊັ່ນ: ຕົວລະຄອນສິນໄຊ ແມ່ນໄດ້ຜ່ານຜ່າຄວາມຫຍຸ້ງຍາກນີ້ບໍ່ຖອຍຜົນງານແຕ່ລະນັ້ນແມ່ນເປັນການເຝິກຊ້ອມຈາກບັນຫານ້ອຍກ້າວໄປຫາບັນຫາໃຫຍ່, ສ່ວນທ້າວທັງ 6 ແມ່ນບໍ່ມີຄວາມສາມາດ ເມື່ອພົບອຸປະສັກກໍຢ້ານກົວແຕ່ຊໍ້າພັດຢາກໄດ້ຜົນງານຈຶ່ງໄດ້ພາກັນວາງແຜນຂ້າສິນໄຊ ແລ້ວນໍາເອົາອາໄປຖວາຍພໍ່. ໝາຍຄວາມວ່າ: ຕົວລະຄອນເອກຢູ່ໃນເລື່ອງແມ່ນຈະໄດ້ຜ່ານຜ່າອຸປະສັກຫຍຸ້ງຍາກນາໆ ເພື່ອເຮັດຫຼອນໜ້າທີ່ຂອງຕົນຢ່າງໜ້າເພິ່ງພໍໃຈ.

- **ເຮັດວຽກໂດຍບໍ່ຮຽກຮ້ອງຄຸນຄ່າຕອບແທນ**

ຂໍ້ມູນຕິດຕໍ່:

Email: syvongsak123@gmail.com ໂທ: +85620 98003648

ການເຮັດວຽກຂອງບັນດາທ້າວ-ນາງທີ່ເປັນຕົວລະຄອນໃນບົດເລື່ອງຕ່າງໆນັ້ນແມ່ນເຂົາເຈົ້າເຮັດວຽກດ້ວຍຄວາມສະໝັກໃຈບໍ່ແມ່ນຖືກບັງຄັບແຕ່ຢ່າງໃດ ເມື່ອເຮັດສຳເລັດເຂົາເຈົ້າກໍບໍ່ຮຽກຮ້ອງເອົາຜົນງານ, ແຕ່ສຸດທ້າຍເຂົາເຈົ້າກໍໄດ້ເປັນພະຍາປົກຄອງເມືອງ, ນັ້ນແມ່ນປະຊາລາຊະດອນເປັນຜູ້ມອບໃຫ້ຍ້ອນຄວາມດີຂອງພວກເຂົາ, ປະຊາລາຊະດອນເຂົາເຈົ້າມີຄວາມມຸ່ງຫວັງຢາກມີເຈົ້າເມືອງຜູ້ທີ່ດີປົກຄອງບ້ານເມືອງ ແລະ ນຳພາເຂົາເຈົ້າສ້າງບ້ານແປງເມືອງເທົ່ານັ້ນ ແລະໃນການເຮັດວຽກຂອງບັນດາທ້າວ-ນາງເຫຼົ່ານັ້ນກໍຈະຕ້ອງແມ່ນຜູ້ທີ່ສາມາດແກ້ໄຂຂໍ້ຂັດແຍ່ງຢູ່ໃນສັງຄົມນັ້ນໄດ້. ຕົວຢ່າງ: ເລື່ອງ: ສິນໄຊ ນຳເອົາອາມາໃຫ້ພໍ່ (ກຸດສະລາດ), ເລື່ອງ: ນາງແຕງອ່ອນ ທ້າວ ເກດສຸລິຍົງຍານ ໄປນຳເອົາແມ່ມາໃຫ້ພໍ່ (ມະຫາວົງ) ແລ້ວເຂົາເຈົ້າກໍບໍ່ຫວັງເອົາຫຍັງ ແຕ່ຍ້ອນຄວາມດີຂອງເຂົາເຈົ້າປະຊາລາຊະດອນຈຶ່ງຍົກເອົາເປັນພະຍາປົກຄອງເມືອງ.

### 2.5.2 ເນື້ອໃນເວົ້າເຖິງແມ່ຍິງເປັນຮູບພາບໃຈກາງຂອງວັນນະກາໄລຍະນັ້ນ

ຕົວລະຄອນເພດຍິງໄດ້ສ່ອງແສງຫຼາຍແງ່ຫຼາຍມູມ ແລະ ຫຼາຍເນື້ອໃນຂອງບົດວັນນະກຳໃນໄລນະນີ້, ເພດຍິງເປັນຜູ້ທີ່ໄດ້ຮັບຄວາມທຸກຫຼາຍ, ທຸກກວ່າໝູ່ແມ່ນຍ້ອນຮີດຄອງປະເພນີ ຍ້ອນຜົວແຕ່ເຂົາເຈົ້າພັດເປັນຜູ້ທີ່ບໍລິສຸດຜຸດຜ່ອງຕໍ່ລູກຕໍ່ຜົວ, ເຂົາເຈົ້າເປັນຄົນສະຫຼາດ, ມີພິກໄຫວໃນການຕໍ່ສູ້ເພື່ອປ້ອງກັນຄວາມຮັກເຊິ່ງມັນໄດ້ສ່ອງແສງອອກໃນບົດເລື່ອງຕ່າງໆເຊັ່ນ: ຕົວລະຄອນນາງ ປະທຸມມາໃນເລື່ອງ: ທ້າວໂສວັດ, ນາງເທວະດາທີສີງກາ ໃນເລື່ອງທ້າວຈັນທະຄາດ ແລະ ອື່ນໆ. ເພື່ອຮັກສາຄວາມຮັກ ແລະ ຄວາມບໍລິສຸດຕໍ່ຜົວ, ນາງ ປະທຸມມາໄດ້ໃຊ້ພິກໄຫວຂອງຕົນເພື່ອຕ້ານກັບນາຍພານ, ຕ້ານກັບນາຍສະເພົາທີ່ບັງຄັບເອົານາງເປັນເມຍ, ເພື່ອລໍຄອຍເຈົ້າໂສວັດຜູ້ເປັນຜົວຂອງນາງກັບມາ, ນາງໄດ້ຂ້ານາຍພານເອົາເຫຼົ້າເກືອນາຍສະເພົາຈົນເມົາແລ້ວນາງຈຶ່ງລັກໂຕນໜີ, ການກະທຳດັ່ງກ່າວ ແມ່ນສະແດງໃຫ້ເຮົາເຫັນໄດ້ນ້ຳໃຈອັນບໍລິສຸດຂອງນາງ. ນອກຈາກນີ້ ຕົວລະຄອນເພດຍິງຍັງໄດ້ຮັບຄວາມທຸກຍ້ອນການຂັດແຍ້ງກັນຢູ່ໃນສັງຄົມລະຫວ່າງຍົດຖາບັນດາສັກ, ເມຍນ້ອຍ, ເມຍຫຼວງ. ຄວາມຂັດແຍ່ງນີ້ແມ່ນຄວາມເປັນຕາຍໃນສັງຄົມສັກດີນາເຊິ່ງມັນໄດ້ສ່ອງແສງອອກແຈ້ງໃນເລື່ອງ: ນາງແຕງອ່ອນ ແລະ ຈຳປາສີ່ຕົ້ນ. ຕົວຢ່າງ: ຕົວລະຄອນນາງແຕງອ່ອນໄດ້ຮັບຄວາມທຸກແມ່ນຍ້ອນແມ່ໄວຍາກາໄດ້ຖອກເທເງິນຄຳຊື້ຈ້າງຜູ້ທີ່ມີອຳນາດໃນເມືອງຄື: ແສນເມືອງ, ເສນາອາມາດເພື່ອປັກປ່ຳ ແລະ ໂຄ່ນລົ້ມນາງແຕງອ່ອນ ຈຸດປະສົງກໍເພື່ອເອົາລູກສາວທັງ 5 ຂອງມັນຂຶ້ນເປັນເອກເວທີ (ມະຫາລາຊະນີ) ໃນທີ່ສຸດແມ່ນໄວຍາກາ ກໍປະຕິບັດໄດ້ຕາມຈຸດປະສົງນາງແຕງອ່ອນຖືກເຕະຕີ ແລະ ຖືກຂັບໄລ່ອອກຈາກເມືອງໄປດ້ວຍຄວາມທຸກທໍລະມານ. ຕົວລະຄອນເພດຍິງສ່ອງແສງອອກໃນວັນນະກຳໃນໄລຍະນີ້ຍັງໄດ້ເວົ້າເຖິງຄວາມເກັ່ງກ້າສາມາດໃນການຕໍ່ສູ້ຕ້ານການຮຸກຮານອີກສະແດງອອກຜ່ານຕົວລະຄອນພິມມະຈາລີໃນເລື່ອງ: ທ້າວ ຈັນທະຄາດ, ນາງພິມມະຈາລີ ສາມາດກຳດາບ, ກຳລາຂຶ້ນຄາບຄໍຊ້າງເພື່ອຕ້ານກັບການຮຸກຮານຂອງພະຍາໄພຍະສານແຕ່ສຸດທ້າຍນາງກໍເອົາຊະນະພະຍາໄຊຍະສານໄດ້.

ຈາກບັນຫາຂ້າງເທິງ, ພວກເຂົາເຫັນໄດ້ວ່າ: ແມ່ຍິງກໍມີຄວາມສາມາດເທົ່າທຽມກັບຜູ້ຊາຍເໝືອນກັນໃນທຸກຂົງເຂດວຽກງານອື່ນໆ. ດັ່ງນັ້ນ, ພວກເຮົາຈຶ່ງສາມາດສະຫຼຸບໄດ້ວ່າ: ຕົວລະຄອນເພດຍິງໄດ້ສ່ອງແສງຫຼາຍເນື້ອໃນຂອງບົດ

ວັນນະກໍາໃນໄລຍະນີ້. ສະນັ້ນ, ແມ່ຍິງຈຶ່ງກາຍເປັນຮູບພາບໃຈກາງວັນນະຄະດີໄລຍະນີ້ເໝືອນກັນ. ຈາກນັ້ນ, ກໍຍັງມີເນື້ອໃນເວົ້າເຖິງຄວາມຮັກ ແລະ ການຕໍ່ສູ້ເພື່ອປົກປ້ອງຄວາມຮັກຂອງທ້າວນາງໃນລະບອບສັກດີນາລາວ. ຢູ່ໃນລະບອບສັງຄົມໃດກໍເໝືອນກັນຄວາມຮັກລະຫວ່າງບ່າວ-ສາວແມ່ນກົດເກນໜຶ່ງທີ່ບໍ່ມີໃຜອາດຫ້າມໄດ້. ຕາມທໍາມະດາແລ້ວກ່ອນຈະມີຄວາມຮັກໄດ້ແມ່ນຄູ່ບ່າວ-ສາວນັ້ນເປັນຜູ້ເລືອກເຟັ້ນເອົາເອງແຕ່ຢູ່ໃນລະບອບສັກດີນານີ້ຄວາມຮັກຂອງຜູ້ເປັນລູກແມ່ນຂຶ້ນກັບຄວາມຮັກຂອງຜູ້ເປັນພໍ່ແມ່ ເຖິງລູກຮັກກັນ ແຕ່ຫາກວ່າພໍ່ແມ່ບໍ່ມັກກໍເອົາກັນບໍ່ໄດ້.

ບັນຫາດັ່ງກ່າວເປັນສິ່ງກົດໜ່ວງຄວາມຮັກຂອງທ້າວນາງທັງຫຼາຍໃນເມື່ອຄວາມຮັກຂອງເຂົາເຈົ້າບໍ່ບັນລຸຕາມຈຸດປະສົງເປົ້າໝາຍ ທ້າວນາງບ່າວ-ສາວຕ້ອງຊອກຫາທາງອອກໃຫ້ແກ່ຕົນເອງດ້ວຍ 2 ວິທີຄື:

2) **ວິທີທີ່ໜຶ່ງ:** ແມ່ນຕໍ່ສູ້ໄປຕາມເສັ້ນທາງທີ່ເປີດປະຕູໃຫ້ແກ່ຕົນເອງໄດ້ຕາມຄວາມມຸ່ງຫວັງ.

ຕົວຢ່າງ:

| | |
|---|---|
| ... ພໍ່ແມ່ບໍ່ພ້ອມ | ເຮົາຈຶ່ງແຕ່ງກອງລັກ |
| ພໍ່ແມ່ບໍ່ມັກ | ເຮົາຈຶ່ງແຕ່ງກອງໂຈນ |
| ເຮົາພ້ອມພາກັນເຂົ້າ | ດົງດອນປ່າໃຫຍ່ |
| ເອົາຫີນກ້ອນໃຫຍ່ | ມາເປັນລຸງຕາ |
| ເອົາຫີນກ້ອນໜາ | ມາເປັນນ້າບ່າວ |
| ເພິ່ນກ່າວໃຫ້ແລ້ວ | ເຮົາຈຶ່ງຕ່າວຄືນເມືອ... |

3) **ວິທີທີ່ສອງ:** ແມ່ນຕ້ານກັບພໍ່ແມ່ດ້ວຍເສັ້ນທາງສຸດທ້າຍນັ້ນຄືຂ້າຕົນເອງຕາຍຊາດນີ້ເຂົາເຈົ້າບໍ່ໄດ້ກັນປາຖະໜາໃນຊາດໜ້າເຂົາເຈົ້າຈະໄດ້ເປັນຄູ່ກັນ. ບັນຫານີ້ສ່ອງແສງອອກໃນບົດວັນນະກໍາຫຼາຍເລື່ອງເຊັ່ນ: ທ້າວບາຈຽງ ແລະ ນາງມະໂລງ, ທ້າວພຸດທະເສນກັບນາງກັງຣີ, ຊຸນລູນາງອົ້ວ ເມື່ອນາງອົ້ວຖືກບັງຄັບໃຫ້ເອົາທ້າວຊຸນລາງນາງໄດ້ຂໍນໍາແມ່ຫຼາຍຄັ້ງວ່າ: ນາງເອົາກັບຊຸນລາງບໍ່ໄດ້ເພາະນາງໄດ້ຮັກກັບທ້າວຊຸນລູແລ້ວ ແຕ່ແມ່ຂອງນາງອົ້ວບໍ່ຍອມຟັງຕາມຄໍາຮຽກຮ້ອງຂອງນາງນາງຈໍາຕ້ອງເລືອກເສັ້ນທາງຂອງນາງເອງແມ່ນຜູກຄໍຕາຍເທົ່ານັ້ນເພື່ອພົບກັນ ແລະ ເອົາກັນເປັນຄູ່ຄອງໃນຊາດ ໜ້າ.

| | | |
|---|---|---|
| ຕົວຢ່າງ: | ອົ້ວຕາຍກ່ອນ | ຖືປີ່ກັບແຄນ |
| | ຊຸນລູຕາຍລຸນ | ຖືຫວີກັບຊ້ອງ |
| | ໄປເອ້ເຢາະເອ້ຢ້ອງ | ເມືອງຟ້ານໍາ່ຍກັນ |

ຈຶ່ງເວົ້າໄດ້ວ່າ: ໃນສັງຄົມເກົ່າມັນໄດ້ສະກັດກັ້ນຄວາມຮັກຂອງບ່າວ-ສາວຄວາມຮັກຖືກກົດໜ່ວງຖ່ວງດຶງ ຍ້ອນບໍ່ໄດ້ຕາມຄວາມຸ່ງຫວັງເຂົາເຈົ້າຈຶ່ງຕ້ານຄືນຢ່າງສຸດຂີດ ແລະ ການຕ້ານຄືນນັ້ນແມ່ນສຽງກ່າວປະນາມຢ່າງຈະແຈ້ງຕໍ່ສັງຄົມ.

### 2.5.3 ເນື້ອໃນທີ່ເວົ້າເຖິງກາລັງອະທາໃນສັງຄົມ

ຂໍ້ມູນຕິດຕໍ່:
Email: syvongsak123@gmail.com    ໂທ: +85620 98003648

ກຳລັງອະທຳໃນສັງຄົມທີ່ສ່ອງແສງອອກໃນບົດວັນນະກຳຕ່າງໆໃນໄລຍະນີ້ປະກອບມີ 2 ປະເພດຄື: ປະເພດຜີສາງນາງໄມ້, ຍັກ ແລະ ປະເພດມະນຸດ. ຕົວຢ່າງ: ຍັກຫັດທະຈັນ, ຍັກສາລະວັນ ໃນໜັງສືເລື່ອງນາງແຕງອ່ອນ, ຍັກກຸມພັນໃນເລື່ອງ: ສັງສິນໄຊ, ຮຸ້ງໃນເລື່ອງ: ຈຳປາສີ່ຕົ້ນ ທີ່ລົງມາກິນຊາວເມືອງຈັກຂິນຈົນຕາຍໝົດກ້ຽງຍັງເຫຼືອແຕ່ນາງປະທຸມມາ ( ນາງຄຳກອງ ) ເທົ່ານັ້ນ. ສ່ວນໂທດກຳຂອງຍັກກຸມພັນໃນເລື່ອງ: ສັງສິນໄຊ ແມ່ນລັກເອົານາງສຸມຸນທາໄປ, ຍັກຫັດທະຈັກໃນເລື່ອງ: ນາງແຕງອ່ອນ ແມ່ນລັກເອົານາງແຕງອ່ອນ ແລະ ນາງຍອດຟ້າໄປ. ແຕ່ຖ້າສັງເກດເບິ່ງໃຫ້ຄັກແລ້ວກຳລັງອະທຳທີ່ເປັນຜີສາງ, ຍັກໂຂບໍ່ເປັນຕາຍ້ານເທົ່າກັບກຳລັງອະທຳທີ່ເປັນມະນຸດ. ຕົວຢ່າງ: ພວກທ້າວທັງຫົກຂ້າສິນໄຊ ເພື່ອຫວັງຍາດເອົາຜົນງານຂອງສິນໄຊ, ນາງອັກຄີຫາເລື່ອງໃສ່ນາງຄຳກອງວ່າ ເປັນຄົນນອກໃຈຜົວ ແລະ ນາງກໍຖືກພະຍາຈຸນລະມະນີໄລ່ໜີໄປເປັນຂ້າລ້ຽງໝູ, ນາງແມ່ໄວຍາກາຫາເລື່ອງໃສ່ນາງແຕງອອນວ່າຫຼິ້ນຊູ້ຈາກຜົວ, ນາງກໍຖືກມະຫາວົງເຕະຕີ ແລະ ຂັບໄລ່ໜີອອກຈາກເມືອງ. ສະນັ້ນ, ເຮົາຈຶ່ງເວົ້າໄດ້ວ່າ: ກຳລັງອະທຳທີ່ເປັນມະນຸດ ແມ່ນໂທດຮ້າຍຈະແຈ້ງ ແລະ ເປັນຕາຍ້ານກວ່າໝູ່.

### 2.5.4 ນ້ຳໃຈຮັກຊາດຂອງນັກແຕ່ງ

ເວົ້າເຖິງນ້ຳໃຈຮັກຊາດຂອງນັກແຕ່ງແມ່ນມີຫຼາຍແງ່ ແລະ ຫຼາຍໄລຍະແຕ່ລະໄລຍະມັນກໍສະແດງອອກໂດຍຜ່ານທາງທຳມະຊາດ ຊຶ່ງສະແດງໃຫ້ພວກເຮົາເຫັນວ່າ: ປະເທດເຮົາມີຄວາມສວຍສົດງົດງາມ, ມີຊັບໃນດິນສິນໃນນ້ຳມັ່ງມູນທີ່ສຸດບັນຫານີ້ ແມ່ນເດັ່ນທີ່ສຸດ ເຊິ່ງມັນໄດ້ສະແດງອອກໃນໜັງສືເລື່ອງຕ່າງໆເຊັ່ນ: ຕົ້ນໄມ້, ດອກໄມ້ຕະຫຼອດຮອດຫ້ວຍຮ່ອງຄອງບຶງ ທີ່ປາກົດຢູ່ໃນເລື່ອງ. ນັກແຕ່ງໄດ້ສະແດງໃຫ້ພວກເຮົາເຫັນແຈ້ງໂດຍຜ່ານການອ່ານ, ການຟັງບົດນິພົນ, ເຮົາຈະມີຄວາມດູດດື່ມຈິດໃຈກ່ຽວກັບທຳມະຊາດ. ເວົ້າເຖິງສັດສາວາສິ່ງກໍໄດ້ປາກົດອອກເຊັ່ນ: ການ ເຄື່ອນໄຫວໄປມາ, ສຽງຮ້ອງໂຫຂອງມັນໄດເປັນພາຍອັນໜຶ່ງ ທີ່ສວຍສົດງົດງາມ ແລະ ຈັບອົກຈັບໃຈພວກເຮົາ.

ເວົ້າລວມແລ້ວ, ພາບທຳມະຊາດດັ່ງກ່າວ, ແມ່ນເຮັດໃຫ້ປະເທດຊາດມີຄວາມສວຍງາມເຊິ່ງມັນໄດ້ສ້າງຄວາມພໍໃຈໃຫ້ກັບນັກແຕ່ງ, ນັກຂຽນໃນສະໄໝກ່ອນກໍຄືປັດຈຸບັນມີຄວາມເພິ່ງພໍໃຈ. ຜ່ານການປະດິດຄິດແຕ່ງຂອງເຂົາເຈົ້າໄດ້ຊີ້ໃຫ້ເຫັນພວກເຮົາທັງຊາດນັບແຕ່ພູດອຍລົງຮອດທົ່ງພຽງ. ເວົ້າເຖິງອາດການດຳລົງຊີວິດໃນສະໄໝກ່ອນແມ່ນອີງໃສ່ທຳມະຊາດ ເພາະທຳມະຊາດໄດ້ຕິດພັນກັບເຂົາເຈົ້າ, ທຳມະຊາດໄດ້ຊ່ວຍແກ້ໄຂເຂົາເຈົ້າຍາມໂສກເສົ້າ, ຍາມອຸກອັ່ງແຄ້ນ. ມາເຖິງປັດຈຸບັນຮູບພາຍທຳມະຊາດຍັງຕິດພັນຢູ່ສະເໝີ. ມາຮອດສະໄໝການປະຕິວັດ ທ່ານ ພູມີ ວົງວິຈິດ ກໍໄດ້ໝູນໃຊ້ຮູບພາບດັ່ງກ່າວເຂົ້າໃນການປະດິດແຕ່ງກອນ.

ຕົວຢ່າງ:

...ນີ້ແຫຼະເພິ່ນວ່ານ້ຳ    ເຕັມແຕ່ປູປາ
ເພິ່ນວ່ານາ    ເຕັມແຕ່ຮວງເຂົ້າ
ພູເຂົາກວ້າງ    ຈອງຈັນເຕັມປ່າ
ຫີນສີລາຢູ່ນ້ຳ    ເປັນແກ້ວຄ່າແພງ...

ສະໄໝກ່ອນເຂົາເຈົ້າໄດ້ສະແດງນໍ້າໃຈຮັກຊາດດ້ວຍຄວາມຮັກ, ຄວາມຮັບຜິດຊອບ, ສັນລະເສີນ ແລະ ປົກປັກຮັກສາບ້ານເມືອງ ໂດຍສະເພາະແມ່ນສະແດງອອກການພັນລະນາຮູບພາບທຳມະຊາດ, ຄວາມອຸດົມຮັ່ງມີຂອງທຳມະຊາດເຊັ່ນ: ສຽງນໍ້າຕົກຕາດ, ສຽງນົກ, ສຽງກາ, ສຽງລົມພັດ ແລະອື່ນໆ. ທຳມະຊາດໄດ້ຝັງເລິກເຂົ້າໃນຈິດໃຈ ແລະ ມັນສະໝອງຂອງເຂົ້າເຈົ້າ ເພາະພາບທຳມະຊາດໄດ້ສະໜິດຕິດພັນກັບການດຳລົງຊີວິດນັບແຕ່ມື້ກຳເນີດຈົນຮອດມື້ສິ້ນລົມຫາຍໃຈ.

ເວົ້າລວມແລ້ວເນື້ອໃນຕົ້ນຕໍຂອງວັນນະຄະດີຂຽນໃນສະໄໝອານາຈັກລາວລ້ານຊ້າງສະຕະວັດທີ XIV ແມ່ນສ່ອງແສງໃຫ້ເຫັນເຖິງສະພາບແນວຄິດຈິດໃຈ, ຄວາມມຸ່ງມາດປາຖະໜາ ແລະ ຄວາມໄຝ່ຝັນຂອງປະຊາຊົນຢາກມີຊີວິດເຕັມໄປດ້ວຍຄວາມສຸກກາຍສະບາຍໃຈ, ຢູ່ໃນສັງຄົມສັກດີນາທີ່ມີຄວາມເປັນທຳໂດຍມີພະຍາປົກຄອງເມືອງທີ່ດີ, ມີນໍ້າໃຈເອື້ອເຟື້ອເພື່ອແຜ່, ມີຄວາມປີຊາສາມາດປົກຮັກສາ ແລະ ສ້າງບ້ານແປງເມືອງໃຫ້ຈະເລີນກ້າວໜ້າ (ສົມທະເພີຍ ສີວົງສັກ ແລະອຳໄພ ສອນທະລາ, 2019).

**2.6 ສິລະປະການປະດິດແຕ່ງ** (20 ນາທີ)

<u>ກິດຈະກຳ 2:</u>

- ຄູຕັ້ງຄຳຖາມໃຫ້ນັກສຶກສາຄົ້ນຄວ້າ:
  1) ສິລະປະການປະດິດແຕ່ງວັນນະຄະດີຂຽນສະໄໝອານາຈັກລາວລ້ານຊ້າງເປັນແນວໃດ?
- ຄູໃຫ້ນັກສຶກສາຕອບ 1-2 ຄົນ (5 ນາທີ)
- ຄູນັກສຶກສາສະຫຼຸບຮ່ວມກັນ: (15 ນາທີ)

**2.6.1 ການສ້າງໂຄງຮ່າງປະກອບເລື່ອງ**

ພື້ນຖານເຄົ້າເລື່ອງບົດປະພັນຕ່າງໆເຫຼົ່ານີ້ ແມ່ນເອົາຈາກຕົວຈິງຂອງສັງຄົມສັກດີນາສະໄໝນັ້ນມາປະດິດແຕ່ງເປັນເລື່ອງແບບເພີນຈິດອັດສະຈັນສົມທົບກັບການຢືມເຄົ້າເລື່ອງຊາດົກ ຫຼື ວັນນະຄະດີອິນເດຍມາແຕ່ງແຝງເປັນເລື່ອງຂອງລາວເຊັ່ນ: ເລື່ອງພະລັກພະລາມ,ສຽວສະຫວາດ,ສິນໄຊ, ນາງແຕງອ່ອນ ນີ້ເປັນຕົ້ນ. ສ່ວນເລື່ອງທີ່ແປເອົາຈາກຊາດົກໂດຍກົງແມ່ນເລື່ອງ: ພະເວດສັນດອນ, ມະໂຫສົດເຫຼົ່ານີ້ເປັນຕົ້ນ.

**1) ສິລະປະວັກຕອນ**

ແມ່ນສ້າງໃຫ້ພວກເຮົາສົນໃຈໃນເວລາອ່ານເລື່ອງຕ່າງໆຈຸດໜັກແມ່ນສ້າງໃຫ້ພວກເຮົາສົນໃຈຊີວິດຂອງຕົວລະຄອນ, ການເຄື່ອນໄຫວຂອງຕົວລະຄອນສິລະປະແຕ່ລະຕອນມີເນື້ອໃນຄົບຖ້ວນເຮັດໃຫ້ຜູ້ອ່ານ, ຜູ້ຊົມສົນໃຈທຸກໆເລື່ອງ. ນັກປະພັນໄດ້ຊັບຊ້ອນເລື່ອງຢ່າງເປັນລະບົບ, ການແຕ່ງຂຶ້ນຕົ້ນສ່ວນຫຼາຍແມ່ນ <ບັດນີ້ > ແລະລົງທ້າຍ < ແລ້ວທໍ່ນີ້ >...

ຂໍ້ມູນຕິດຕໍ່:
Email: syvongsak123@gmail.com ໂທ: +85620 98003648

**2) ຮູບພາບຕົວລະຄອນ**

**- ຝ່າຍສິນທຳ:** ສ່ວນຫຼາຍມີການກຳເນີດມາແຕ່ຊັ້ນເທິງເຊິ່ງແມ່ນລູກຫຼານຂອງພະອິນພະພົມ ເພື່ອສິ່ງລົງມາເກີດ ຫຼື ລົງມາຄຸ້ມຄອງເມືອງລຸ່ມ, ຈະຕ້ອງແມ່ນຜູ້ທີ່ສາມາດແກ້ໄຂບັນຫາຕ່າງໆຢູ່ໃນສັງຄົມໄດ້ ແລະ ຈະຕ້ອງເປັນບຸນຄົນອຸດົມຄະຕິມີຮູບຮ່າງທີ່ສວຍງາມທາງດ້ານນອກ ແລະ ມີຄວາມເກັ່ງກ້າສາມາດເອົາຊະນະກັບສັດຕູໄດ້.

**- ຝ່າຍອະທຳ:** ແມ່ນຜູ້ທີ່ລົງມາເກີດເພື່ອໄຊ້ຊາດ, ເປັນຕົວຮ້າຍ, ຮູບຮ່າງບາງເທື່ອກໍເປັນຍັກ, ຜີຕ່າງໆ. ຕົວລະຄອນນີ້ຈະບໍ່ມີຄວາມສາມາດ ແຕ່ວ່າຍັກມີຄວາມເກັ່ງກ້າສາມາດນາບຂູ່ຝ່າຍສິນທຳ

**3) ການອາດພາບພາຍໃນຈິດ**

ແມ່ນເວົ້າເຖິງການຕໍ່ສູ້ເພື່ອເຮັດໃຫ້ຜູ້ອ່ານມີຄວາມສະອື້ນໃຈເຊິ່ງສະແດງເຖິງຄວາມເບີກບານມ່ວນຊື່ນ, ຄວາມທຸກຄວາມໂສກເສົ້າຫງ່ອມເຫງົາຂອງຕົວລະຄອນເຊິ່ງເຮັດໃຫ້ຜູ້ອື່ນມີອາລົມຈິດຄ້ອຍໄປນຳເຊັ່ນ: ການຢືມເອົາສັດມາເວົ້າເຖິງແນວຄິດຂອງຄົນເຮົາ, ເອົາຮູບພາບທຳມະຊາດທີ່ສວຍສົດງົດງາມມາເວົ້າເຖິງຄວາມເບີກບານມ່ວນຊື່ນ. ຮູບພາບທຳມະຊາດທີ່ນັກແຕ່ງໄດ້ຍົກຂຶ້ນມາສ່ອງແສງເຂົ້າໃນບົດເລື່ອງສ່ວນຫຼາຍແມ່ນຮູບພາບທີ່ສວຍງາມຂອງທຳມະຊາດ, ການດຳລົງຊີວິດທີ່ຕິດພັນກັບທຳມະຊາດເຊັ່ນ: ສັດສາວາສິ່ງ, ພູຜາປ່າດົງ, ຫ້ວຍຮ່ອງຄອງບຶງ ແລະ ອື່ນໆ.

**4) ການໃຊ້ສັບພາສາ ແລະ ຄຳສຸພາສິດ**

ເມື່ອເຮົາອ່ານບົດນິພົນເຮົາຈະເຫັນການເຄື່ອນໄຫວຂອງຕົວລະຄອນ ເຊິ່ງມີທັງຄວາມມ່ວນຊື່ນ ແລະ ຄວາມໂສກເສົ້າໃນເວລາເຮົາໄດ້ນັ່ງຟັງ ແລະໄດ້ອ່ານເລື່ອງໃດເລື່ອງໜຶ່ງເຊັ່ນ: ເລື່ອງທ້າວສິນໄຊ ບັ້ນນາງກິນນາລີ, ເຂົາກໍໄດ້ໃຊ້ຄຳຜະຫຍາຕໍ່ແຍກັນເຊັ່ນ: ໜ້າ 84, 85, 89, 94. ເມື່ອເວົ້າເຖິງທັດສະນະ ຫຼື ບ່ອນຢືນຂອງຕົວລະຄອນຜ່ານການເວົ້າ, ການໂອ້ລົມຂອງຕົວລະຄອນມັນໄດ້ສະແດງເຖິງຫຼັກໝັ້ນທີ່ຕັ້ງຂອງຕົວລະຄອນເຊັ່ນ: ຢູ່ໃນເລື່ອງ “ທ້າວຈັນທະຄາດ” ເວລາໃດຈັນທະຄາດກໍສະແດງເຖິງລັກສະນະຂອງຜູ້ທຸກຈົນ.

ຕົວຢ່າງ: ຈັນທະຄາດພາຍຫຼັງທີ່ມີຜົນງານແລ້ວພະຍາເມືອງອິນທະປັດຖານະຄອນພ້ອມດ້ວຍເສນາອາມາດ ແລະ ຊາວເມືອງເຫັນດີມອບລູກສາວຄື: ນາງເທວະທິສິງກາໃຫ້ເປັນເມຍແຕ່ທ້າວໄດ້ປະຕິເສດທ້າວໄດ້ກ່າວວ່າ:

“ ... ແນວກາດຳ ບໍ່ຫ່ອນທຽມຫົງແກ້ວ
ຢ້ານແຕ່ເທວະດາທ້ອງ ຕຽມຂວັນຊີ້ງ່ອນ...”

ແມ່ນເປັນຄຳເວົ້າຂອງປະຊາຊົນສາມັນທີ່ເລືອກເຟັ້ນເອົາມາເປັນຄຳເວົ້າທີ່ມ່ວນເກາະ ແລະ ຊ່ວຍໃຫ້ເລື່ອງມີຄຸນຄ່າສູງຂຶ້ນ.

ຂໍ້ມູນຕິດຕໍ່:
Email: syvongsak123@gmail.com ໂທ: +85620 98003648

ຕົວຢ່າງ: ໃນເລື່ອງທ້າວຈັນທະຄາດ

"ຂ້ານີ້ແນວຊາດເຊື້ອ ຄົນນ້ອຍບໍ່ສົມ ພະເອີຍ
ປຽບດັ່ງກາດຳຮ້າຍ ເດຍລະສານສັດຖ່ອຍ
ລືຈັກລົງອາບນໍ້າ ອະນົມແກ້ວຫ່ອມຄວນ ພະເອີຍ
ໄວ້ແກ່ລາຊະສີທ້ອນ ຫົງຄຳລົງອາບ
ຂ້ານີ້ສົມແຕ່ລົງອາບນໍ້າ ໃນຫ້ວຍບວກຄວາຍ ນັ້ນແລ້ວ"

**ສະຫຼຸບ:** ຜ່ານການຄົ້ນຄວ້າວັນນະຄະດີສະໄໝລ້ານຊ້າງເຊິ່ງມັນໄດ້ສະແດງອອກເຊັ່ນ: ບັນດານັກປະພັນ, ນັກກະວີໄດ້ຂຽນເລື່ອງຂຶ້ນລ້ວນແຕ່ນອນຢູ່ໃນຊົນຊັ້ນສັກດີນາເຊິ່ງນອນຢູ່ໃນຖັນນັກບວດ, ອາຈານ ສະນັ້ນ, ໃນບົດເລື່ອງຕ່າງໆບໍ່ສາມາດຫຼີກຫຼ່ຽງໄດ້ທາງດ້ານຈຸດດີ ແລະ ຈຸດອ່ອນ, ຈຸດໜັກແມ່ນເລັ່ງໃສທັດສະນະຂອງນັກແຕ່ງເບິ່ງແລ້ວກໍມີຫຼາຍອັນຜິດພາດນັ້ນແມ່ນມາຈາກສາສະໜາສະແດງອອກໃນບົດເລື່ອງທີ່ຕົວລະຄອນໄດ້ຮັບຄວາມທຸກຍ້ອນຊາດກອນໄດ້ກະທຳບາບ ແລະ ຊາດນີ້ຈະໄດ້ມາໃຊ້ກຳ.

ຕົວຢ່າງ: ເລື່ອງພະເວດສັນດອນ. ນອກຈາກນັ້ນບັນດາບົດເລື່ອງຈະມີຂໍ້ຂັດແຍ່ງໃນສະໄໝສັກດີນານັ້ນຄື: ການຂັດແຍ່ງຊົນຊັ້ນ, ການພັນລະນາແມ່ນພັນລະນາຊົນຊັ້ນເທິງໃນສັງຄົມ, ສ່ວນນາງສະໜົມຕ່າງໆ ແມ່ນພຽງແຕ່ຍົກຂຶ້ນມາເປັນຂ້ອຍຂ້າເທົ່ານັ້ນສ່ວນສິ່ງທີ່ດີນັ້ນແມ່ນບົດເລື່ອງໄດ້ມີຫຼາຍມຸມ, ຕົວລະຄອນຈະມີອູດົມຄະຕິເນື້ອໃນວັນນະຄະດີກວ້າງຂວາງແຕ່ງແບບເພີນຈິດ, ສ່ອງແສງຮູບພາບຕົວຈິງຢູ່ໃນສັງຄົມ.

ຕົວຢ່າງ: ເລື່ອງນາງແຕ່ງອ່ອນສ່ອງແສງເຖິງຄວາມມຸ່ງຫວັງຂອງສັງຄົມຈິ່ງສ້າງຕົວລະຄອນສົມທຳຂຶ້ນມາ, ເພື່ອແກ້ໄຂຂໍ້ຂັດແຍ່ງຕ່າງໆ.

ຈາກບັນຫານີ້, ພວກເຮົາຮຽນກໍມີການຕຳນິວິຈານ, ເລືອກເຟັ້ນເອົາ, ໂດຍຜ່ານເນື້ອໃນວັນນະຄະດີ, ແນວຄິດສາສະໜາຄອບງຳທັງໝົດເຂົ້າອີງໃສ່ເວນກຳເພື່ອແກ້ໄຂສັງຄົມ. ຜູ້ທີ່ຕົກທຸກໄດ້ຍາກ ຫຼື ຜູ້ທີ່ເປັນກຳລັງອະທຳຢູ່ໃນສັງຄົມລ້ວນອີງໃສ່ບຸນຄຸນ, ບາບ, ໂທດທັງໝົດ. ຈາກນັ້ນເຂົ້າຍັງຈັດວັນນະຄະດີສະໄໝສັກດີນາຢູ່ໃນການໃຊ້ຊາດຂອງພະພຸດທະເຈົ້າລະແດງອອກໃນເລື່ອງ "10, 50, 500 ຊາດ".

ດ້ານສິລະປະອັນດີເດັ່ນແມ່ນການໝູນໃຊ້ສິລະປະວັກຕອນ, ໃຊ້ຊັບພາສາ, ພັນລະນາ. ສະນັ້ນ, ພວກເຮົາຄວນເອົາໃຈໃສ່ການໝູນໃຊ້ຄຳຜະຫຍາ ແລະ ຄຳສຸພາສິດ. ເມື່ອພວກເຮົາອ່ານຈະເຫັນໄດ້ທັງໝົດ.

**ລວມຄວາມວ່າ**: ວັນນະຄະດີສະໄໝສັກດີນານີ້ໄດ້ເກີດຂຶ້ນໃນເງື່ອນໄຂພິເສດຂອງປະຊາຊົນມັນໄດ້ສືບທອດເອົາສິ່ງຍອດສູງຂອງວັນນະຄະດີພື້ນເມືອວລາວ, ມັນໄດ້ເສີມຂະຫຍາຍວັນນະຄະດີພື້ນເມືອງຂຶ້ນອີກກ້າວໜຶ່ງ. ຈາກນັ້ນວັນນະຄະດີໃນສະໄໝນີ້ຍັງແມ່ນສະໄໝຂະຫຍາຍຕົວຮຸ່ງເຮືອງກວ່າໝູ່ໝົດມີຄຸນຄ່າອັນໃຫຍ່ຫຼວງທາງດ້ານເນື້ອໃນ ແລະ ສິລະປະໄດ້ສົ່ງຜົນສະທ້ອນອັນດີຕໍ່ໄລຍະຕໍ່ມາ. ເຖິງວ່າວັນນະຄະດີໃນໄລຍະນີ້ຈະມີຈຸດອ່ອນບາງເລັກນ້ອຍກໍຕາມແຕ່

ຂໍ້ມູນຕິດຕໍ່:

Email: syvongsak123@gmail.com ໂທ: +85620 98003648

ມັນຍັງໄດ້ເປັນທຶນຮອນອັນລ້ຳຂອງຊາດ ແລະ ເປັນແວ່ວແຍ່ງໃຫ້ແກ້ການຂະຫຍາຍຕົວຂອງວັນນະຄະດີໃນໄລຍະຕໍ່ມາ. ພວກເຮົາຄົ້ນຄວ້າເພື່ອຊອກເອົາເນື້ອໃນອັນດີຂອງມັນເພື່ອປະກອບເຂົ້າໃນການສຶກສາອົບຮົມໃຫ້ນັກຮຽນມີນ້ຳໃຈຮັກຊາດ, ມີນ້ຳໃຈເອກອ້າງຕໍ່ວັນນະຄະດີຂອງຊາດ, ຮູ້ປົກປັກຮັກສາມູນມັງມໍລະດົກທີ່ປູ່ຍ່າຕາຍາຍຂອງພວກເຮົາປະໄວ້ໃຫ (ສົມທະເພີຍ ສີວົງສັກ ແລະອຳໄພ ສອນທະລາ, 2019).

**III. ຂັ້ນສະຫຼຸບ**

- ❖ ຄູເນັ້ນຈຸດສຳຄັນຂອງບົດຮຽນ
- ເນື້ອໃນວັນນະຄະດີ
- ສີລະປະການປະດິດແຕ່ງ

**IV. ວັດ ແລະປະເມີນ**

- ຄູຖາມຂໍ້ຂ້ອງໃຈຂອງນັກຮຽນ (ຖ້າມີ) ຄູອະທິບາຍຄືນ
- ຄູຕັ້ງຄາຖາມ: ແຕ່ລະຂໍ້ຂອງບົດຮຽນ?
- ໃຫ້ນັກຮຽນຕອບ 1-2 ຄົນ
- ຄູສັງເກດຄຳຕອບ ແລະ ສະຫຼຸບຄືນ

**V. ຂັ້ນຕັກເຕືອນ**

- ຄູແນະນານັກຮຽນອ່ານບົດຮຽນໃໝ່
- ສຶກສາແນວຄິດຂອງຜູ້ຮຽນ
- ມອບວຽກບ້ານ

**ເອກະສານອ້າງອີງ**

ກຽງແກ້ວ ນອນນະວົງ ພ້ອມຄະນະ. (2002). ວັນນະຄະດີລາວ 630LI222. ວິທະຍາໄລວິທະຍາສາດພື້ນຖານ ມະຫາ ວິທະຍາໄລແຫ່ງຊາດ.

ສົມທະເພີຍ ສີວົງສັກ ແລະ ອຳໄພ ສອນທະລາ. (2019). ວັນນະຄະດີລ້ານຊ້າງ. ຄະນະສຶກສາສາດ ມະຫາວິທະຍາໄລ ສຸພານຸວົງ.

ຄູສອນປະຈຳວິຊາ

ປທ.ສົມທະເພີຍ ສີວົງສັກ